EY
Building a better working world

Ernst & Young Lao Limited
6th Floor, Capital Tower
23 Singha Road, Nongbone Village
Saysettha District, Vientiane Capital, Lao PDR

Tel : + 856 21 455 077
Fax: + 856 21 455 078
ey.com

ເລກທີ: 60904110/16644678

# ບົດລາຍງານຂອງຜູ້ກວດສອບເອກະລາດ

**ຮຽນ: ສະພາຜູ້ບໍລິຫານທະນາຄານ ລາວ-ຝຣັ່ງ ຈຳກັດ**

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບ ບົດລາຍງານການເງິນຂອງທະນາຄານ ລາວ-ຝຣັ່ງ ຈຳກັດ (ທະນາຄານ) ເຊິ່ງປະກອບດ້ວຍ ໃບສະຫຼຸບຊັບສິນບັດ ນະວັນທີ 31 ທັນວາ 2013, ໃບລາຍງານຜົນໄດ້ຮັບ, ໃບລາຍງານກະແສເງິນສົດ ແລະ ໃບລາຍງານສ່ວນປ່ຽນແປງຂອງທຶນ ສຳລັບທ້າຍປີ ແລະ ເອກະສານຊ້ອນທ້າຍບົດລາຍງານການເງິນ ຈາກໜ້າ 5 ຫາ 35.

***ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ບົດລາຍງານການເງິນ***

ຄະນະບໍລິຫານທະນາຄານ ແມ່ນມີຄວາມຮັບຜິດຊອບໃນການກະກຽມ ແລະ ນຳສະເໜີໃບລາຍງານການເງິນໃຫ້ຖືກຕ້ອງໂດຍສອດຄ່ອງກັບກົດໝາຍການບັນຊີ, ກົດລະບຽບການບັນຊີອື່ນໆທີ່ວາງອອກໂດຍທະນາຄານແຫ່ງ ສປປ ລາວ. ຄວາມຮັບຜິດຊອບລວມມີ: ການອອກແບບ, ການຈັດຕັ້ງປະຕິບັດ, ການດຳເນີນການຄວບຄຸມພາຍໃນທີ່ກ່ຽວຂ້ອງໃນການສ້າງ ແລະ ນຳສະເໜີບົດລາຍງານການເງິນທີ່ຖືກຕ້ອງເຊິ່ງປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ; ເລືອກເຟັ້ນ ແລະ ນຳໃຊ້ນະໂຍບາຍການບັນຊີທີ່ແທດເໝາະ ແລະ ການຄາດຄະເນການບັນຊີທີ່ສົມເຫດຜົນໃນສະພາບການຕ່າງໆ.

***ຄວາມຮັບຜິດຊອບຂອງຜູ້ກວດສອບ***

ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າ ແມ່ນອອກຄຳເຫັນຕໍ່ກັບເອກະສານລາຍງານການເງິນເຫຼົ່ານີ້ ບົນພື້ນຖານຜົນການກວດສອບຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບມາດຕະຖານການກວດສອບສາກົນ. ມາດຕະຖານເຫຼົ່ານັ້ນຮຽກຮ້ອງໃຫ້ພວກຂ້າພະເຈົ້າປະຕິບັດຕາມຂໍ້ບັງຄັບດ້ານຈັນຍາບັນ, ວາງແຜນ ແລະ ດຳເນີນການກວດສອບເພື່ອໃຫ້ໄດ້ຮັບຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນ ແມ່ນປາດສະຈາກຜິດພາດອັນໃຫຍ່ຫຼວງ.

ການກວດສອບລວມມີ ຂັ້ນຕອນການດຳເນີນການກວດສອບ, ຫຼັກຖານຢັ້ງຢືນຄວາມຖືກຕ້ອງຂອງຈຳນວນເງິນ ແລະ ການເປີດເຜີຍຂໍ້ມູນໃນບົດລາຍງານການເງິນ. ຂັ້ນຕອນການຄັດເລືອກຂຶ້ນກັບການພິຈາລະນາ ຂອງທີມງານກວດສອບ, ເຊິ່ງລວມເຖິງການປະເມີນຄວາມສ່ຽງຂໍ້ຜິດພາດອັນໃຫຍ່ຫລວງໃນບົດລາຍງານການເງິນ ບໍ່ວ່າເກີດຈາກການສໍ້ໂກງ ຫລື ຍ້ອນການຈົດກ່າຍຜິດ. ໃນການປະເມີນຄວາມສ່ຽງເຫຼົ່ານັ້ນ, ຜູ້ກວດສອບໄດ້ພິຈາລະນາເຖິງການຄຸ້ມຄອງພາຍໃນທີ່ພົວພັນເຖິງການກະກຽມ ແລະ ການນຳສະເໜີບົດລາຍງານການເງິນທີ່ຖືກຕ້ອງ ເພື່ອເປັນແບບແຜນຂັ້ນຕອນການກວດສອບທີ່ສົມເຫດຜົນຕາມສະພາບການ, ແຕ່ບໍ່ແມ່ນຈຸດປະສົງເພື່ອການສະແດງຄວາມເຫັນທີ່ສົ່ງຜົນເຖິງການຄຸ້ມຄອງພາຍໃນຂອງທະນາຄານ. ການກວດສອບໄດ້ລວມເອົາທັງການປະເມີນນະໂຍບາຍການບັນຊີທີ່ໄດ້ນຳໃຊ້ ແລະ ການຄາດຄະເນອັນເໝາະສົມດ້ານການບັນຊີຂອງຄະນະບໍລິຫານ, ກໍ່ຄືການປະເມີນທັງໝົດຂອງການນຳສະເໜີບົດລາຍງານຖານະການເງິນ.

ພວກຂ້າພະເຈົ້າ ເຊື່ອວ່າຫຼັກຖານທີ່ໄດ້ມາຈາກການກວດສອບນັ້ນແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

***ຄຳເຫັນ***

ໃນຄຳເຫັນຂອງພວກຂ້າພະເຈົ້າ, ບົດລາຍງານການເງິນສະບັບນີ້ໄດ້ສະແດງຖານະການເງິນຂອງທະນາຄານຖືກຕ້ອງຕາມພາບພົດຕົວຈິງ ນະວັນທີ 31 ທັນວາ 2013 ລວມທັງ ຜົນປະກອບການ ແລະ ກະແສເງິນສົດຂອງທະນາຄານປະຈຳປີໂດຍສອດຄ່ອງກັບກົດໝາຍບັນຊີ ແລະ ກົດລະບຽບການ ບັນຊີອື່ນໆ ທີ່ວາງອອກໂດຍ ທະນາຄານແຫ່ງ ສປປ ລາວ.

Ernst & Young Lao Ltd

ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ
ERNST & YOUNG LAO CO.,LTD

ນະຄອນຫລວງວຽງຈັນ, ສປປ ລາວ
31 ມີນາ 2014

ທະນາຄານ ລາວ-ຝຣັ່ງ ຈຳກັດ

ໃບລາຍງານຜົນໄດ້ຮັບ
ສຳລັບທ້າຍປີ ວັນທີ 31 ທັນວາ 2013

| ລຳດັບ | ລາຍການ | ເອກະສານ ຊ້ອນທ້າຍ | 2013 ລ້ານກີບ | 2012 ລ້ານກີບ |
|---|---|---|---|---|
| **A.** | **ລາຍຮັບ ແລະ ລາຍຈ່າຍຈາກການດຳເນີນງານ** | | | |
| **1.** | **ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ** | **3** | **51,778** | **33,844** |
| 1.1 | ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ ລະຫວ່າງ ທະນາຄານ | | 1,972 | 6,859 |
| 1.2 | ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນ ຈາກລູກຄ້າ | | 33,408 | 17,649 |
| 1.3 | ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນອື່ນໆ | | 16,398 | 9,336 |
| **2.** | **ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ** | **3** | **(11,144)** | **(6,906)** |
| 2.1 | ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ ລະຫວ່າງ ທະນາຄານ | | (3,651) | (1,801) |
| 2.2 | ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍທີ່ຄ້າຍຄືກັນ ໃຫ້ລູກຄ້າ | | (7,493) | (5,105) |
| **I.** | **ລາຍຮັບສຸດທິຈາກດອກເບ້ຍ ແລະ ລາຍຮັບ ທີ່ຄ້າຍຄືກັນ** | **3** | **40,634** | **26,938** |
| **9** | **ລາຍຮັບຈາກຄ່າທຳນຽມ ແລະ ການບໍລິການ** | **4** | **6,689** | **3,967** |
| **10** | **ລາຍຈ່າຍຈາກຄ່າທຳນຽມ ແລະ ການບໍລິການ** | **4** | **(1,382)** | **(382)** |
| **13** | ກຳໄລ/(ຂາດທຶນ)ສຸດທິ ຈາກການຊື້ຂາຍເງິນຕາຕ່າງປະເທດ ແລະ ທອງ | | 3,530 | 877 |
| **II.** | **ລາຍຮັບສຸດທິຈາກການດຳເນີນງານ** | | **49,471** | **31,400** |

ທະນາຄານ ລາວ-ຝຣັ່ງ ຈຳກັດ

ໃບລາຍງານຜົນໄດ້ຮັບ (ຕໍ່)
ສຳລັບທ້າຍປີ ວັນທີ 31 ທັນວາ 2013

| ລຳດັບ | ລາຍການ | ເອກະສານ ຊ້ອນທ້າຍ | 2013 ລ້ານກີບ | 2012 ລ້ານກີບ |
|---|---|---|---|---|
| **B** | **ລາຍຮັບ ແລະ ລາຍຈ່າຍອື່ນໆ** | | | |
| **15** | **ລາຍຮັບອື່ນໆຈາກການດຳເນີນງານ** | | **428** | **197** |
| **16** | **ລາຍຈ່າຍຄ່າບໍລິຫານທົ່ວໄປ** | | **(33,049)** | **(24,278)** |
| 16.1 | ລາຍຈ່າຍເງິນເດືອນ ແລະ ອື່ນໆທີ່ກ່ຽວຂ້ອງກັບພະນັກງານ | 5 | (11,276) | (7,232) |
| 16.2 | ລາຍຈ່າຍຄ່າບໍລິຫານອື່ນໆ | 6 | (21,773) | (17,046) |
| **17** | **ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ** | | **(7,363)** | **(5,195)** |
| **18** | **ລາຍຈ່າຍອື່ນໆຈາກການດຳເນີນງານ** | **7** | **(1,331)** | **(724)** |
| **19** | **ຄັງສຳຮອງສຸດທິສຳລັບເງິນກູ້ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ** | **12.2** | **(1,996)** | **-** |
| 19.1 | ລາຍຈ່າຍເງິນແຮສະເພາະ | | (1,996) | - |
| 19.2 | ເກັບຄືນເງິນແຮສະເພາະ | | - | - |
| **III.** | **ລວມຍອດກຳໄລ/ຂາດທຶນກ່ອນອາກອນ** | | **6,160** | **1,400** |
| **23** | **ອາກອນກຳໄລພາຍໃນປີ** | **17** | - | (42) |
| **IV.** | **ກຳໄລ/ຂາດທຶນຫຼັງຫັກອາກອນ** | | **6,160** | **1,358** |

ກະກຽມໂດຍ:

ທ່ານ ນາງ Annette Philaphandeth
ຫົວໜ້າຝ່າຍການເງິນ

ອະນຸມັດໂດຍ:

ທ່ານ Guillaume Perdon
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ
31 ມີນາ 2014

ທະນາຄານ ລາວ-ຝຣັ່ງ ຈຳກັດ

ໃບສະຫຼຸບຊັບສິນບັດ
ນະວັນທີ 31 ທັນວາ 2013

| ລ/ດ | ຊັບສິນ | ເອກະສານ ຊ້ອນທ້າຍ | 31 ທັນວາ 2013 ລ້ານກີບ | 31 ທັນວາ 2012 ລ້ານກີບ |
|---|---|---|---|---|
| **I** | **ເງິນສົດ ແລະ ເງິນຝາກ ຢູ່ທະນາຄານກາງ "ທຫລ"** | | **168,826** | **66,303** |
| 1 | ເງິນສົດໃນກຳມື | 8 | 51,215 | 33,366 |
| 2 | ເງິນຝາກຢູ່ທະນາຄານກາງ | 9 | 117,611 | 32,937 |
| **II** | **ໜີ້ຕ້ອງຮັບຈາກທະນາຄານອື່ນ** | | **190,324** | **72,480** |
| 1 | ເງິນຝາກກະແສລາຍວັນ | 10.1 | 70,189 | 72,480 |
| 2 | ເງິນຝາກມີກຳນົດ | 10.2 | 120,135 | - |
| **III** | **ລົງທຶນໃນຫລັກຊັບ** | **11** | **222,000** | **204,000** |
| 1 | ຫລັກຊັບປະເພດຖືໄວ້ຈົນຄົບກຳນົດ | | 222,000 | 204,000 |
| **IV** | **ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ (ຫລັງຫັກເງິນແຮ)** | **12** | **443,898** | **249,024** |
| **V** | **ຊັບສິນບັດຄົງທີ່** | | **39,650** | **33,352** |
| 1 | ການກໍ່ສ້າງກຳລັງດຳເນີນ | | 2,103 | 337 |
| 2 | ຊັບສິນບັດຄົງທີ່ບໍ່ມີຕົວຕົນ | 13.1 | 127 | 765 |
| 3 | ຊັບສິນບັດຄົງທີ່ມີຕົວຕົນ | 13.2 | 37,420 | 32,250 |
| **VI** | **ຊັບສິນອື່ນໆ** | | **43,944** | **35,577** |
| 1 | ດອກເບ້ຍຄ້າງຮັບ | | 11,276 | 7,906 |
| 2 | ຊັບສິນອື່ນໆ | 14 | 32,668 | 27,671 |
| | **ລວມຊັບສິນ** | | **1,108,642** | **660,736** |

ທະນາຄານ ລາວ-ຝຣັ່ງ ຈຳກັດ

ໃບສະຫຼຸບຊັບສິນບັດ (ຕໍ່)
ນະວັນທີ 31 ທັນວາ 2013

| ລ/ດ | ໜີ້ສິນ ແລະ ທຶນ | ເອກະສານ ຊ້ອນທ້າຍ | 31 ທັນວາ 2013 ລ້ານກີບ | 31 ທັນວາ 2012 ລ້ານກີບ |
|---|---|---|---|---|
| **I** | **ໜີ້ຕ້ອງສົ່ງໃຫ້ທະນາຄານອື່ນ** | **15** | **377,965** | **81,408** |
| 1 | ເງິນຝາກກະແສລາຍວັນ | | 120,000 | - |
| 2 | ເງິນຝາກປະຈຳ | | 123,827 | 62,160 |
| 3 | ການກູ້ຢືມຈາກທະນາຄານອື່ນ | | 133,980 | 17,862 |
| 4 | ໜີ້ຕ້ອງສົ່ງອື່ນໆໃຫ້ທະນາຄານອື່ນ | | 158 | 1,386 |
| **II** | **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | **16** | **426,553** | **286,139** |
| 1 | ເງິນຝາກກະແສລາຍວັນ ແລະ ຝາກປະຢັດ | | 301,706 | 166,538 |
| 2 | ເງິນຝາກມີກຳນົດ | | 115,582 | 114,027 |
| 3 | ໜີ້ຕ້ອງສົ່ງອື່ນໆໃຫ້ລູກຄ້າ | | 9,265 | 5,574 |
| **III** | **ໜີ້ສິນອື່ນໆ** | | **8,571** | **4,915** |
| 1 | ດອກເບ້ຍຄ້າງຈ່າຍ | | 3,924 | 2,961 |
| 2 | ອາກອນຄ້າງຈ່າຍ | | 118 | 42 |
| 3 | ໜີ້ສິນອື່ນໆ | 18 | 4,530 | 1,912 |
| | **ລວມຍອດໜີ້ສິນ** | | **813,090** | **372,462** |
| **IV** | **ທຶນ ແລະ ຄັງສຳຮອງ** | | | |
| 1 | ທຶນຈົດທະບຽນຖອກແລ້ວ | | 300,000 | 300,000 |
| 2 | ຄັງແຮທົ່ວໄປສຳລັບກິດຈະກຳສິນເຊື່ອ | 12.2 | 2,352 | 1,234 |
| 3 | ຂາດທຶນສະສົມ | | (6,800) | (12,960) |
| | **ລວມຍອດທຶນ** | | **295,552** | **288,274** |
| | **ລວມຍອດໜີ້ສິນ ແລະ ທຶນ** | | **1,108,642** | **660,736** |

## ໃບລາຍງານການປ່ຽນແປງຂອງທຶນ
ສຳລັບທ້າຍປີ ນະວັນທີ 31 ທັນວາ 2013

| ລາຍການ | ທຶນຈົດທະບຽນ ຖອກແລ້ວ ລ້ານກີບ | ຄັງແຮທົ່ວໄປສຳລັບກິດຈະກຳສິນເຊື່ອ ລ້ານກີບ | ຂາດທຶນສະສົມ ລ້ານກີບ | ລວມຍອດ ລ້ານກີບ |
|---|---|---|---|---|
| **ຍອດເຫຼືອນະວັນທີ 01 ທັນວາ 2011** | **300,000** | **526** | **(14,318)** | **286,208** |
| ກຳໄລສຸດທິພາຍໃນປີ | - | - | 1,358 | 1,358 |
| ຫັກຄັງແຮເຂົ້າເປັນລາຍຈ່າຍພາຍໃນປີ | - | 708 | - | 708 |
| **ຍອດເຫຼືອນະວັນທີ 31 ທັນວາ 2012** | **300,000** | **1,234** | **(12,960)** | **288,274** |
| ກຳໄລສຸດທິພາຍໃນປີ | - | - | 6,160 | 6,160 |
| ຫັກຄັງແຮເຂົ້າເປັນລາຍຈ່າຍພາຍໃນປີ | - | 1,118 | - | 1,118 |
| **ຍອດເຫຼືອ ນະວັນທີ 31 ທັນວາ 2013** | **300,000** | **2,352** | **(6,800)** | **295,552** |

ກະກຽມໂດຍ:

ທ່ານ ນາງ Annette Philaphandeth
ຫົວໜ້າຝ່າຍການເງິນ

ອະນຸມັດໂດຍ:

ທ່ານ Guillaume Perdon
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ
31 ມີນາ 2014